ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ: 0142 /ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ: 07 ກຸມພາ 2020

ຂາເຂົ້າ | ສຳນັກງານອົງການປົກຄອງ ນະ... | ໜ່ວຍງານບໍລິການປະ...
ເລກທີ: 0536
ວັນທີ: 10.2.2020

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

- ບຸກຄົນ, ນິຕິບຸກຄົນ, ບັນດາຮ້ານຂາຍຢາ, ຮ້ານຈຳໜ່າຍຜະລິດຕະພັນການຢາ ແລະ ຫົວໜ່ວຍທຸລະກິດຕ່າງໆ.

**ເລື່ອງ:** ການກຳນົດລາຄາຂາຍ ຜ້າອັດປາກ-ດັງ (ແຜ່ນຕອງ 3 ຊັ້ນ) ຊະນິດສາຍຢາງຢືດ ທຸກລຸ້ນ ແລະ ນ້ຳຢາລ້າງມື ໃນຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ, ສະບັບເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010 ວ່າດ້ວຍການຄຸ້ມຄອງສິນຄ້າ ແລະ ຄ່າບໍລິການ.
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 71/ນຍ,ລົງວັນທີ 06 ຕຸລາ 2017, ວ່າດ້ວຍການສ້າງຕັ້ງຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 147/ຫສນຍ, ລົງວັນທີ 05 ກຸມພາ 2020.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ໃນນາມປະທານຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຕາມຂໍ້ຕົກລົງ ເລກທີ 71/ນຍ ອອກແຈ້ງການ:**

1. ກຳນົດເອົາລາຍການສິນຄ້າ ຜ້າອັດປາກ-ດັງ (ແຜ່ນຕອງ 3 ຊັ້ນ) ຊະນິດສາຍຢາງຢືດ ທຸກລຸ້ນ ແລະ ເຈວລ້າງມື ເຂົ້າຢູ່ໃນບັນຊີຄວບຄຸມລາຄາຂອງລັດຖະບານ ໃນຊ່ວງໄລຍະນີ້.
2. ກຳນົດລາຄາຂາຍ ຜ້າອັດປາກ-ດັງ (ແຜ່ນຕອງ 3 ຊັ້ນ) ຊະນິດສາຍຢາງຢືດ ທຸກລຸ້ນ **ສູງສຸດບໍ່ໃຫ້ເກີນ 25.000 ກີບ/ກັບ** (01 ກັບ ມີ 50 ອັນ), ຖ້າແຍກອອກຂາຍຍ່ອຍ ຕ້ອງຂາຍໃນລາຄາບໍ່ໃຫ້ເກີນ **1.000 ກີບ/ອັນ.**
3. ຫ້າມບໍ່ໃຫ້ບຸກຄົນ, ນິຕິບຸກຄົນ, ບັນດາຮ້ານຂາຍຢາ, ຮ້ານຈຳໜ່າຍຜະລິດຕະພັນການຢາ ແລະ ຫົວໜ່ວຍທຸລະກິດຕ່າງໆ ສວຍໂອກາດຂຶ້ນລາຄາ ຫຼື ກັກຕຸນສິນຄ້າ ເພື່ອເກັງກຳໄລ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ເທິງນີ້.
4. ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການຊີ້ນຳ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ/ເທດສະບານ ແລະ ແຕ່ງຕັ້ງພະນັກງານ ກໍຄືເຈົ້າໜ້າທີ່ກວດກາການຄ້າ ບົນພື້ນຖານສົມທົບກັບພາກສ່ວນກ່ຽວຂ້ອງ ລົງຕິດຕາມ, ກວດກາ ຢູ່ຕາມບັນດາຮ້ານຂາຍຢາ, ຮ້ານຈຳໜ່າຍຜະລິດຕະພັນການຢາ ແລະ ຮ້ານຂາຍຍ່ອຍຕ່າງໆ ເປັນປະຈຳປົກກະຕິ. ຖ້າຫາກພົບເຫັນການລະເມີດ ໃຫ້ໃຊ້

ມາດຕະການທາງດ້ານບໍລິຫານ, ດຳເນີນຄະດີທາງອາຍາ, ຄະດີແພ່ງ, ຖອນໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ແລະ ມາດຕະການອື່ນໆ ຕາມກົດໝາຍທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ.

5. ຖ້າບຸກຄົນໃດ ຫາກພົບເຫັນຜູ້ປະກອບການລະເມີດແຈ້ງການສະບັບນີ້ ແມ່ນໃຫ້ແຈ້ງເຖິງເບີໂທສາຍດ່ວນ ປົກປົກປ້ອງຜູ້ຊົມໃຊ້ 1510 ແລະ ສາຍດ່ວນລັດຖະບານ 1516.

6. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ຈະມີການປ່ຽນແປງ ໃນກໍລະນີ ຕົ້ນທຶນການຜະລິດ ຫຼື ການນຳເຂົ້າ ເໜັງຕີງຂຶ້ນ-ລົງ, ກະຊວງອຸດສາຫະກຳ ແລະ ການຄ້າ ຈະອອກແຈ້ງການໃໝ່ເພີ່ມເຕີມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ. ຂນ

ລັດຖະມົນຕີ ຊ

(ປະທານຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ)

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ

ບ່ອນນຳສົ່ງ:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 01 ສະບັບ (ຕາງລາຍງານ);
- ຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຂັ້ນສູນກາງ ຢ່າງລະ 01 ສະບັບ (ເພື່ອຊາບ ແລະ ຊີ້ນຳໃນການຈັດຕັ້ງປະຕິບັດ);
- ຮອງເຈົ້າແຂວງ/ຮອງເຈົ້າຄອງນະຄອນຫຼວງ (ປະທານຄະນະຊີ້ນຳຂັ້ນແຂວງ) ຢ່າງລະ 01 ສະບັບ (ເພື່ອຊາບ ແລະ ຊີ້ນຳໃນການຈັດຕັ້ງປະຕິບັດ);

ໝາຍເຫດ:

- ມີຕົວຢ່າງຍີ່ຫໍ້ຜ້າອັດປາກ 3 ຊັ້ນ ຄັດຕິດມາພ້ອມນີ້.